Australian Government

Australian Centre for International Agricultural Research

# Vegetable Protected Cropping

## ການປູກພືດໝູນວຽນ

ການປູກພືດຜັກແບບໝູນວຽນແມ່ນເພື່ອຊ່ວຍໃນການຜະລິດຜັກໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້ ໂດຍສະເພາະແມ່ນການຜະລິດພືດຜັກໃນຮອບໜຶ່ງປີໃຫ້ເກີດປະໂຫຍດສູງສຸດ, ສໍາຄັນໄປກວ່ານັ້ນຍັງສາມາດປ້ອງກັນການເກີດຂອງພະຍາແລະ ສັດຕູພືດອີກດ້ວຍ, ການຄັດເລືອກພືດຜັກໃນການປູກຍັງໄດ້ອີງໃສ່ລະດູການປູກ, ສະຖານທີ່ ແລະ ການຕະຫຼາດທີ່ດີ, ສໍາລັບການປູກພືດໝູນວຽນໃນລະຫວ່າງ 3 ຫາ 4 ປີ ແມ່ນຕ້ອງໄດ້ເລືອກພືດຜັກທີ່ມີຕະກຸນ ແລະ ປະເພດທີ່ແຕກຕ່າງກັນ, ສໍາລັບປັບປຸງ ແລະ ນໍາໃຊ້ດິນໃນການປູກຕ້ອງມີການພັກດິນ, ການໃສ່ຝຸ່ນ ແລະ ການປູກພືດທີ່ມີສີຫຂຽວ ເພື່ອຊ່ວຍໃນການປັບຄວາມອຸດົມສົມບຸນຂອງດິນ.

### ເຫດຜົນ

- ເພື່ອປ້ອງກັນການເກີດຂອງພະຍາດ ແລະ ສັດຕູພືດ
- ຊ່ວຍໃນການຮັກສາໂຄງສ້າງຂອງດິນ ແລະ ເຮັດໃຫ້ດິນມີຄວາມອຸດົມສົມບູນ
- ເຮັດໃຫ້ສານເຄມີຈືດຈ້າງລົງ
- ໃຫ້ຜົນຜະລິດສູງ

### ຫຼັກການປະຕິບັດ

- ການປູກພືດຜັກແມ່ນປູກເປັນກຸ່ມຜັກທີ່ແຕກຕ່າງກັນ
- ຫຼີກຫຼ່ຽງການປູກພືດຊະນິດດຽວກັນ
- ຕ້ອງມີການພັກດິນ ຫຼື ການປູກພືດທີ່ມີສີຫຂຽວ ເພື່ອຊ່ວຍໃນການປັບຄວາມອຸດົມສົມບຸນຂອງດິນ 1 ຄັ້ງຕໍ່ປີ

### ກຸ່ມຊະນິດພືດຜັກ





**ກ່າວຄໍາຂອບໃຈ**

ການຄົ້ນຄວ້າທົດລອງດັ່ງກ່າວ ແມ່ນໃຫ້ທຶນຈາກອົງການຄົ້ນຄວ້າ ກະສິກໍາສາກົນ ຂອງອົດສະຕາລີ, (ACIAR) ພາຍໃຕ້ໂຄງການ ASEM/2012/081

"ເພື່ອປັບປຸງການຕະຫຼາດ ດ້ວຍການຈັດການຫຼັງການເກັບກ່ຽວ ແລະ ການຜະລິດ ອຸດສາຫະກໍາຂອງພືດຜັກຂອງປະເທດ ກໍາປູເຈ້ຍ ແລະ ສປປ ລາວ"


NAFRI · HRC · iDE · SNV

THE CENTRE FOR GLOBAL FOOD AND RESOURCES · THE UNIVERSITY of ADELAIDE · NSW Department of Primary Industries · Charles Sturt University